ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

'07 13 --'

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 07 13 /ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 12 MAR 2024

## ໜັງສືແຈ້ງເຊີນປະມູນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ), ຂໍເຊີນບັນດາບໍລິສັດ ທີ່ສົນໃຈ ແລະ ມີເງື່ອນໄຂ ເໝາະສົມ ເຂົ້າຮ່ວມປະມູນເປີດກວ້າງພາຍໃນ ສໍາລັບ ວຽກ Overhaul ຈັກເບີ 03 ແລະ ຈັກເບີ 04 ເຂື່ອນໄຟຟ້າເຊເສັດ 1.

ການປະມູນ ຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງຂອງ ຜ-ຟຟລ ພາຍໃຕ້ລະບຽບຈັດຊື້-ຈັດຈ້າງ ຜ-ຟຟລ, ສະບັບປັບປຸງ ປີ 2022 ລົງວັນທີ 30/12/2022.

ບໍລິສັດທີ່ມີເງື່ອນໄຂເໝາະສົມ ສົນໃຈ ສາມາດຕິດຕໍ່ພົວພັນ ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ ສໍານັກງານໃຫຍ່ ຜ-ຟຟລ, ຝ່າຍບໍລິຫານງານສະໜັບສະໜູນອົງກອນ, ພະແນກຈັດຊື້, ໃນວັນລັດຖະການ, ນັບຈາກວັນທີ 13 MAR 2024 ເຖິງວັນທີ 03 APR 2024, ຕອນເຊົ້າເວລາ 08:30 – 12:00 ໂມງ ແລະ ຕອນບ່າຍ 13:00 – 17:00 ໂມງ. ສໍານັກງານຕັ້ງຢູ່ ຖະໜົນມິດຕະພາບລາວ - ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ.ລາວ, ຕູ້ ປ.ນ 2392, ໂທລະສັບ: (856-21) 316 142, ໂທລະສານ: (856-21) 316 141, 316 834.

ບໍລິສັດ ທີ່ສົນໃຈ ແລະ ຕ້ອງການຊື້ເອກະສານປະມູນ, ຕ້ອງຍື່ນໜັງສືສະເໜີຊື້ຊອງປະມູນ ເຖິງ ຜ-ຟຟລ, ເລີ່ມແຕ່ວັນທີ 13 MAR 2024 ເຖິງວັນທີ 03 APR 2024, ໃນລາຄາ 500.000 (ຫ້າແສນ) ກີບ/ຊຸດ, ວິທີການຊໍາລະຕ້ອງເປັນເງິນສົດ, ໂດຍຈໍານວນເງິນດັ່ງກ່າວ ຜ-ຟຟລ ຈະບໍ່ມີການສົ່ງຄືນ.

ຊອງປະມູນຕ້ອງສົ່ງໃຫ້ ຜ-ຟຟລ ຕາມທີ່ຢູ່ຂ້າງເທິງ, ກ່ອນເວລາ 14:00 ໂມງ, ວັນທີ 06 MAY 2024. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາກໍານົດໄວ້, ຜ-ຟຟລ ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນຈະເລີ່ມເປີດໃນເວລາ 14:00 ໂມງ, ວັນທີ 06 MAY 2024. ໂດຍຊ້ອງໜ້າຄະນະກໍາມະການຈັດຊື້ ຜ-ຟຟລ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມນໍາ.

**ຜູ້ອໍານວຍການໃຫຍ່**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
EDL-Generation Public Company

ວົງສະກຸນ ຍິ່ງຍົງ

ຖະໜົນ ມິດຕະພາບ ລາວ-ໄທ, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ຕູ້ ປ.ນ 2392, ນະຄອນຫຼວງວຽງຈັນ.

ໂທລະສັບ: (856-21) 316142, ແຟັກ: (856-21) 316141, ອີເມລ໌: edlgenhq@edlgen.com.la; ເວັບໄຊທ໌: www.edlgen.com.la